**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມບໍລິການທະນາຄານ

ເລກທີ 1842/ບກ.

ທີ່ນະຄອນຫລວງວຽງຈັນ, ວັນທີ 07 JUL 2020

# ແຈ້ງການແນະນຳ

**ເຖິງ:** ບັນດາທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ.

**ເລື່ອງ:** ແນະນຳເພີ່ມເຕີມກ່ຽວກັບການຈັດຕັ້ງປະຕິບັດ ໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດ COVID-19.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດ COVID-19 ສະບັບເລກທີ 318/ທຫລ, ລົງວັນທີ 19 ພຶດສະພາ 2020;
- ອີງຕາມ ຄຳແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດ COVID-19 ສະບັບເລກທີ 1422/ບກ, ລົງວັນທີ 27 ພຶດສະພາ 2020;
- ອີງຕາມ ກອງປະຊຸມປຶກສາຫາລືລະຫວ່າງກົມບໍລິການທະນາຄານ ກັບ ທທກ ທີ່ເຂົ້າຮ່ວມໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດ COVID-19, ຄັ້ງວັນທີ 02 ກໍລະກົດ 2020.

ກົມບໍລິການທະນາຄານ ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງເພີ່ມເຕີມມາຍັງທ່ານຊາບກ່ຽວກັບການຈັດຕັ້ງປະຕິບັດໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດ COVID-19 ດັ່ງລາຍລະອຽດ ລຸ່ມນີ້:

1. ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ສາມາດປ່ອຍກູ້ບ້ວງໃໝ່ໃຫ້ແກ່ລູກໜີ້ (ລູກຄ້າ) ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດດັ່ງກ່າວ ທີ່ຖືກຈັດຊັ້ນເປັນໜີ້ທວງຍາກ ແຕ່ວັນທີ 01 ມັງກອນ 2020 ເປັນຕົ້ນມາ ເພື່ອເປັນທຶນໝູນວຽນເສີມສະພາບຄ່ອງໃຫ້ສາມາດເຄື່ອນໄຫວທຸລະກິດໄດ້ຢ່າງຄ່ອງຕົວ ຫຼື ຟື້ນຟູການຜະລິດ ແລະ ທຸລະກິດ. ໃນນັ້ນ, ຫ້າມສະໜອງເງິນກູ້ບ້ວງໃໝ່ເພື່ອຊຳລະໜີ້ຕົ້ນທຶນ ແລະ ດອກເບ້ຍ ເງິນກູ້ບ້ວງເກົ່າ;
2. ເພື່ອເຮັດໃຫ້ສາມາດສະໜອງເງິນກູ້ໃຫ້ລູກຄ້າ ທັນກັບຄວາມຕ້ອງການແຫຼ່ງທຶນນຳໃຊ້ເຂົ້າໃນການປ່ອຍສິນເຊື່ອ ຕາມປະເພດຂະແໜງການຜະລິດ ແລະ ທຸລະກິດ, ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ສາມາດພິຈາລະນາປ່ອຍກູ້ໃຫ້ລູກຄ້າກ່ອນ ໂດຍນຳໃຊ້ແຫຼ່ງທຶນຂອງຕົນ ບົນເງື່ອນໄຂ ລູກຄ້າດັ່ງກ່າວແມ່ນໄດ້ຜ່ານການພິຈາລະນາຢ່າງຖີ່ຖ້ວນຈາກທະນາຄານທຸລະກິດ, ສອດຄ່ອງກັບເປົ້າໝາຍການນຳໃຊ້ແຫຼ່ງທຶນຂອງໂຄງການ ແລະ ຢູ່ໃນຂັ້ນຕອນສະເໜີ ແລະ ພິຈາລະນາແຫຼ່ງທຶນຈາກ ທຫລ. ພ້ອມນັ້ນ, ຕ້ອງແມ່ນລູກຄ້າທີ່ສະເໜີຂໍກູ້ຢືມພາຍຫຼັງ ໄດ້ອອກຂໍ້ຕົກລົງວ່າດ້ວຍໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດ COVID-19 ສະບັບເລກທີ 318/ທຫລ, ລົງວັນທີ 19 ພຶດສະພາ 2020;

3. ຂະຫຍາຍເວລາການນຳສົ່ງເອກະສານ ເພື່ອສະເໜີຂໍສິນເຊື່ອໂຄງການ ຂອງທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ຄັ້ງທີ 1 ຈາກວັນທີ 03 ກໍລະກົດ 2020 ເປັນວັນທີ 10 ກໍລະກົດ 2020;
4. ໃຫ້ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ດຳເນີນການເຜີຍແຜ່ບັນດາເອກະສານຕ່າງໆທີ່ຕິດພັນກັບໂຄງການ ໃຫ້ແກ່ສາຂາຂອງຕົນ ແລະ ລູກຄ້າຊາບ ໂດຍຜ່ານສື່ຕ່າງໆ ເປັນຕົ້ນແມ່ນຂໍ້ຕົກລົງສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020, ຄຳແນະນຳເລກທີ 1422/ບກ ລົງວັນທີ 27 ພຶດສະພາ 2020, ແຈ້ງການແນະນຳສະບັບເລກທີ 1842/ບກ ລົງວັນທີ 07 ກໍລະກົດ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກທະນາຄານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນນີ້ດ້ວຍ.

**ວ່າການຫົວໜ້າກົມບໍລິການທະນາຄານ**

ທະນາຄານແຫ່ງ ສປປ ລາວ
ກົມບໍລິການທະນາຄານ

**ຄຳແກ້ວ ວິສີສົມບັດ**

**ຜູ້ປະສານງານ:**

- ພະແນກສິນເຊື່ອ, ກົມບໍລິການທະນາຄານ
  021 262672,
  020 23644289 ( ອະມະຕະ ສຸລິຍະວົງ )
  020 22440559 ( ສ້ອຍສຸວັນ ສີບໍລິບູນ )